## II. <u>ສະພາບການຊື້-ຂາຍຮຸ້ນ ປະຈຳເດືອນ ທັນວາ ປີ 2016.</u>

### 1. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບຕ່າງປະເທດ</u>

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ ທຽບໃສ່ເດືອນທີ່ຜ່ານມາ ມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ** ດັດຊະນີ Dow Jones ປັບຕົວເພີ່ມຂຶ້ນ 5,20%, S&P500 3,05% ແລະ NASDAQ 1,91% . ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກ ກະຊວງແຮງງານ ສ.ອາເມລິກາ ໄດ້ອອກລາຍງານ ຕົວເລກການຈ້າງງານນອກພາກກະສິກຳທີ່ເພີ່ມຂຶ້ນ 178.000 ຕຳແໜ່ງໃນເດືອນ ພະຈິກ ແລະ ອັດຕາການວ່າງງານກໍ່ປັບຕົວຫຼຸດລົງມາຢູ່ທີ່ລະດັບ 4,6% ເຊິ່ງເປັນລະດັບຕ່ຳສຸດນັບຕັ້ງແຕ່ເດືອນ ສິງຫາ ປີ 2007 ຫຼື ຕ່ຳສຸດໃນຮອບ 9 ປີ ໂດຍກະຊວງແຮງງານ ສ.ອາເມລິກາ ຍັງແຈ້ງຕົວເລກເພີ່ມເຕີມວ່າ ພາກເອກະຊົນມີການຈ້າງງານເພີ່ມຂຶ້ນອີກ 156.000 ຕຳແໜ່ງ ແລະ ພາກລັດກໍ່ເພີ່ມຂຶ້ນອີກ 22.000 ຕຳແໜ່ງ ໂດຍການອອກລາຍງານດັ່ງກ່າວຂອງກະຊວງແຮງງານ ແມ່ນສອດຄ່ອງກັບການກ່າວປາໄສຂອງທ່ານ ເຈເນັດ ເຢເລັນ ຜູ້ວ່າການ ທະນາຄານກາງ ສ.ອາເມລິກາ ຫຼື FED ທີ່ລະບຸວ່າ ປະຈຸບັນ ພາກແຮງງານ ແລະ ການຈ້າງງານພາຍໃນປະເທດ ແມ່ນມີຄວາມເຂັ້ມແຂງທີ່ສຸດໃນຮອບເກືອບ 10 ປີ ໃນຂະນະທີ່ ສະມາຄົມຜູ້ສ້າງເຮືອນ ຫຼື NAHB ຂອງ ສ. ອາເມລິກາ ກໍ່ໄດ້ລາຍງານວ່າ ດັດຊະນີຄວາມເຊື່ອໝັ້ນຂອງຜູ້ສ້າງເຮືອນ ປັບຕົວເພີ່ມຂຶ້ນ 7 ຈຸດ ມາຢູ່ທີ່ 70 ຈຸດໃນເດືອນ ທັນວາ ເຊິ່ງເປັນລະດັບສູງສຸດນັບຕັ້ງແຕ່ເດືອນ ກໍລະກົດ ປີ 2005 ປະກອບກັບ ກະຊວງການຄ້າ ສ.ອາເມລິກາ ໄດ້ອອກມາລາຍງານວ່າ ສິນຄ້າຄ້າງສາງພາກການຄ້າຂາຍສົ່ງ ປະຈຳເດືອນ ຕຸລາ ປັບຕົວຫຼຸດລົງ 0,4% ເຊິ່ງເປັນການປັບຕົວຫຼຸດລົງຫຼາຍທີ່ສຸດໃນຮອບ 8 ເດືອນ ເຊັ່ນດຽວກັນກັບມູນຄ່າການຂາຍພາກການຄ້າຂາຍສົ່ງກໍ່ປັບຕົວເພີ່ມຂຶ້ນ 1,4% ໃນເດືອນ ຕຸລາ ເຊັ່ນກັນ ຈາກການປັບຕົວດັ່ງກ່າວ ໄດ້ກາຍເປັນການສົ່ງສັນຍານບົ່ງບອກວ່າ ພາກທຸລະກິດ ແລະ ຜູ້ບໍລິໂພກ ມີການໃຊ້ຈ່າຍເພີ່ມຂຶ້ນ ເຊິ່ງຖືວ່າເປັນປັດໃຈບວກໃຫ້ແກ່ເສດຖະກິດ ໂດຍຜົນສຳຫຼວດຂອງມະຫາວິທະຍາໄລ ມິຊິແກນ ຍັງໄດ້ເປີດເຜີຍຂໍ້ມູນຕື່ມອີກວ່າ ດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກໃນເດືອນ ທັນວາ ປັບຕົວເພີ່ມຂຶ້ນມາຢູ່ທີ່ລະດັບ 98 ເຊິ່ງສູງກວ່າທີ່ນັກວິເຄາະຄາດການທີ່ 94,5 ແລະ ຍັງສູງກວ່າລະດັບ 93,8 ຂອງເດືອນ ພະຈິກ ຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ສິ່ງຜົນເຮັດໃຫ້ດັດຊະນີຕະຫຼາດຫຼັກຊັບ ສ.ອາເມລິກາປັບຕົວເພີ່ມຂຶ້ນຢ່າງຄຶກຄັກເມື່ອທຽບກັບເດືອນກ່ອນ.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ** ດັດຊະນີ ຝຣັ່ງ (CAC40) ປັບຕົວເພີ່ມຂຶ້ນ 6,72%, ດັດຊະນີ ເອີຣົບ (Eurofirst 300) 6,25%, ອັງກິດ (FTSE100) 3,89%, ເຢຍລະມັນ (DAX) 7,33% ແລະ ລຸກຊຳບວກ (LUXXX) 5,12%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບປັບຕົວເພີ່ມຂຶ້ນ ແມ່ນເນື່ອງຈາກ ຜູ້ລົງທຶນຫຼຸດຜ່ອນຄວາມກັງວົນຕໍ່ກັບສະຖານະການການເມືອງພາຍໃນປະເທດ ອີຕາລີ ທີ່ຈະບໍ່ສົ່ງຜົນກະທົບອັນໃດຕໍ່ກັບເອີຣົບໃນເວລານີ້ເຊັ່ນດຽວກັບບັນຫາ Brexit ຂອງປະເທດອັງກິດ ແລະ ລາຍງານລ່າສຸດຂອງດັດຊະນີຜູ້ຈັດການຊື້ເອີຣົບ ຫຼື PMI ພາກການຜະລິດແລະບໍລິການກໍ່ປັບຕົວເພີ່ມຂຶ້ນມາຢູ່ທີ່ລະດັບ 53,9 ໃນເດືອນ ພະຈິກ ຈາກ 53,3 ໃນເດືອນ ຕຸລາ ປະກອບກັບ ກອງປະຊຸມຂອງທະນາຄານກາງ ເອີຣົບ ຫຼື ECB ແມ່ນມີມະຕິຂະຫຍາຍເວລາໃນການຊື້ພັນທະບັດຕາມນະໂຍບາຍຜ່ອນຄາຍທາງປະລິມານ ຫຼື QE ຄວບຄູ່ກັບການດຳເນີນແຜນການໃນການສືບຕໍ່ອັດຕາດອກເບ້ຍເງິນກູ້ທີ່ລະດັບ 0,25% ເພື່ອໃຊ້ເປັນເຄື່ອງມື ແລະ ນະໂຍບາຍກະຕຸ້ນເສດຖະກິດຕໍ່ໄປ ໃນຂະນະທີ່ ທະນາຄານກາງ ປະເທດ ອັງກິດ ຫຼື BOE ປະກາດ ຮັກສາອັດຕາດອກເບ້ຍທີ່ລະດັບ 0,25% ເຊິ່ງເປັນລະດັບຕ່ຳສຸດເປັນປະຫວັດການ ພ້ອມທັງປະກາດຮັກສານະໂຍບາຍໂຄງການຊື້ພັນທະບັດລັດຖະບານຕາມມາດຕະການຜ່ອນຄາຍທາງປະລິມານ ຫຼື QE ດ້ວຍມູນຄ່າ 4,35 ຕື້ປອນ ໃນການປະຊຸມຄັ້ງລ່າສຸດເພື່ອກະຕຸ້ນເສດຖະກິດຂອງປະເທດ ເຊັ່ນດຽວກັນກັບ ສະຖາບັນວິໄຈເສດຖະກິດຂອງປະເທດເຢຍລະມັນ ຫຼື Ifo ໄດ້ປັບຄາດການການຂະຫຍາຍຕົວຂອງ GDP ປະເທດ ໃນປີ 2017 ຂຶ້ນມາຢູ່ທີ່ລະດັບ 1,5% ຈາກ

ເດີມທີ່ກຳນົດໄວ້ທີ່ 1,4% ຈາກທ່າອ່ຽງຄວາມເຂັ້ມແຂງຂອງເສດຖະກິດປະເທດໃນໄຕມາດ 4 ຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ສິ່ງຜົນເຮັດໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ປັບຕົວເພີ່ມຂຶ້ນຢ່າງຄຶກຄັກເມື່ອທຽບກັບເດືອນກ່ອນ.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ຕະຫຼາດຫຼັກຊັບ ອິນໂດເນເຊຍ (JCI) ປັບຕົວຫຼຸດລົງ -0,72%, ສປ.ຈີນ (SHENZHEN) -5,80%, ສປ.ຈີນ (SHANGHAI) -2,51%, ສສ. ຫວຽດນາມ (HOCHIMIN) -1,09%, ສສ. ຫວຽດນາມ (HANOI) -0,62%, ມຽນມ້າ (MYANPIX) -2,36%, ຮ່ອງກົງ (HANG SENG) -2,45% ແລະ ຟີລິບປິນ (PCOMP) -4,19%. ຍົກເວັ້ນ ຕະຫຼາດຫຼັກຊັບ ຍີ່ປຸ່ນ (NIKKEI225) ປັບຕົວເພີ່ມຂຶ້ນ 7,39%, ສ.ເກົາຫຼີ (KOSPI) 3,66%, ໄຕ້ຫວັນ (TWSE) 1,80%, ໄທ (SET) 2,05%, ມາເລເຊຍ (FBMLCI) 0,14%, ດັດຊະນີ ອາຊຽນ (ASEAN 40) 0,04%, ອົດສະຕາລີ (S&P/ASX200) 4,90%, ສິງກະໂປ (STRAIT TIMES) 3,02% ແລະ ກຳປູເຈຍ (CSX) 0,07%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີ ສ່ວນໃຫ່ຍປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກ ຜົນສຳຫຼວດລ່າສຸດທີ່ເຮັດໂດຍ ສຳນັກງານ ຄະນະລັດຖະ ມົນຕີ ຍີ່ປຸ່ນ ໄດ້ລະບຸວ່າ ຄວາມເຊື່ອໝັ້ນຂອງປະຊາຊົນຍີ່ປຸ່ນທີ່ປະກອບທຸລະກິດທີ່ມີຄວາມອ່ອນໄຫວຕໍ່ເສດຖະກິດຂອງປະເທດແມ່ນມີການປັບຕົວເພີ່ມຂຶ້ນສູງກວ່າລະດັບ 50 ເຊິ່ງຢູ່ໃນລະດັບຄວາມເຊື່ອໝັ້ນທາງແງ່ບວກ ແລະ ເປັນການປັບຕົວສູງກວ່າທີ່ເຄີຍສຳຫຼວດໃນເດືອນ ທັນວາ ປີກ່ອນ ເຊັ່ນດຽວກັນກັບ ມູນຄ່າການສັ່ງຊື້ເຄື່ອງຈັກໃນເດືອນ ຕຸລາ ກໍ່ປັບຕົວເພີ່ມຂຶ້ນ 4,1% ເມື່ອທຽບເປັນລາຍເດືອນ ໄດ້ກາຍເປັນການສົ່ງສັນຍານບວກ ເຖິງທ່າອ່ຽງຂອງການປັບຕົວເພີ່ມຂຶ້ນຂອງເສດຖະກິດຂອງປະເທດຍີ່ປຸ່ນ ປະກອບກັບ ສະຖານະການການດຳເນີນມາດຕະການກະຕຸ້ນເສດຖະກິດຂອງ ECB ທີ່ໄດ້ປະກາດລ່າສຸດ ກໍ່ໄດ້ກາຍເປັນປັດໃຈບວກໃຫ້ແກ່ຜູ້ລົງທຶນໃນຕະຫຼາດຫຼັກຊັບອາຊີ ເຊັ່ນກັນ ຈາກບັນດາປັດໃຈທີ່ກ່າວມານີ້ ສິ່ງຜົນເຮັດໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີ ສ່ວນໃຫຍ່ສາມາດປັບຕົວເພີ່ມຂຶ້ນໄດ້ເມື່ອທຽບກັບເດືອນກ່ອນ.

2. **<u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ປິດຢູ່ທີ່ 1.012,72 ຈຸດ ຫຼຸດລົງ 0,27% ເມື່ອທຽບໃສ່ເດືອນຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 362.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,80 ຕື້ກີບ ຫຼຸດລົງ 96,18% ທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 45,37% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.036 ກີບ ຫຼຸດລົງ 97 ກີບເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 139.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 700,55 ລ້ານກີບ ເພີ່ມຂຶ້ນ 207,37% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 30,02% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,41%[1].

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.005 ກີບ ເພີ່ມຂຶ້ນ 34 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 211.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,06 ຕື້ກີບ ຫຼຸດລົງ 97,75% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 66,74% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,38%[2].

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 5.408 ກີບ ຫຼຸດລົງ 692 ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 6.100 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 32,99 ລ້ານກີບ ເພີ່ມຂຶ້ນ 170,41% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລຍ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[3].

---

[1] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[2] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;

[3] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL)  ມີລາຄາຊື້-ຂາຍສະເລ່ຍ 2.500 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 5.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 14 ລ້ານກີບ ເພີ່ມຂຶ້ນ 300% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 33,33% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[4].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.000 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,3 ລ້ານກີບ. ໂດຍໃນເດືອນນີ້ ຜູ້ລົງທຶນຕ່າງປະເທດ ບໍ່ສາມາດຈັບຄູ່ຊື້-ຂາຍຮຸ້ນ SVN ໄດ້. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[5].

**ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**

ທ. ບຸນຈິງ ກອງຄຳ

---

[4]ສັດສ່ວນຖືຄອງຮຸ້ນ  PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[5]ສັດສ່ວນຖືຄອງຮຸ້ນ  SVN  ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

## ຕາຕະລາງ 1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

## ແຜນວາດ 1: ດັດຊະນີຕະຫຼາດຫຼັກຊັບລາວ

| | ເດືອນ ພະຈິກ | | | ເດືອນ ທັນວາ | | | % ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ(ຮຸ້ນ) | ມູນຄ່າການຊື້ຂາຍ (ກີບ) | ລາຄາສະເລຍ | ຈຳນວນ (ຮຸ້ນ) | ມູນຄ່າການຊື້ຂາຍ (ກີບ) | ລາຄາສະເລຍ | ຈຳນວນ | ມູນຄ່າການຊື້ຂາຍ | ລາຄາສະເລຍ |
| BCEL | 44.400 | 227.920.000 | 5.133 | 139.100 | 700.550.000 | 5.036 | 213,29 | 207,37 | -97 |
| EDL-Gen | 9.458.600 | 47.025.425.000 | 4.972 | 211.800 | 1.060.155.000 | 5.005 | -97,76 | -97,75 | 34 |
| LWPC | 2.000 | 12.200.000 | 6.100 | 6.100 | 32.990.000 | 5.408 | 205,00 | 170,41 | -692 |
| PTL | 1.400 | 3.500.000 | 2.500 | 5.600 | 14.000.000 | 2.500 | 300,00 | 300,00 | - |
| SVN | 200 | 600.000 | 3.000 | 100 | 300.000 | 3.000 | -50,00 | -50,00 | - |
| ທັງໝົດ | 9.506.600 | 47.269.645.000 | | 362.700 | 1.807.995.000 | | -96,18 | -96,18 | |

(11 ມັງກອນ 2011 – 22 ທັນວາ 2016)




## ແຜນວາດ 2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

(24 ຕຸລາ – 22 ທັນວາ 2016) ຫົວໜ່ວຍ: ລ້ານ ກີບ



## ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ

| ຊື່ດັດສະນີ | ປະເທດ | ດັດຊະນີໃນເດືອນນີ້ | ດັດຊະນີໃນເດືອນກ່ອນ | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | ສ.ອາເມລິກາ | 19.941,96 | 18.956,69 | 985,27 | 5,20 |
| NASDAQ | ສ.ອາເມລິກາ | 5.471,43 | 5.368,86 | 102,57 | 1,91 |
| S&P500 | ສ.ອາເມລິກາ | 2.265,18 | 2.198,18 | 67 | 3,05 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.426,37 | 1.342,44 | 83,93 | 6,25 |
| DAX | ເຢຍລະມັນ | 11.468,64 | 10.685,13 | 783,51 | 7,33 |
| FTSE100 | ອັງກິດ | 7.041,42 | 6.777,96 | 263,46 | 3,89 |
| CAC40 | ຝຣັ່ງ | 4.833,82 | 4.529,58 | 304,24 | 6,72 |
| LUXXX | ລຸກຊໍາບວກ | 1.685,816 | 1.603,714 | 82,102 | 5,12 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 19.444,49 | 18.106,02 | 1.338,47 | 7,39 |
| KOSPI | ສ.ເກົາຫຼີ | 2.037,96 | 1.966,05 | 71,91 | 3,66 |
| HANGSHENG | ຮ່ອງກົງ | 21.809,8 | 22.357,78 | -547,98 | -2,45 |
| TWSE | ໄຕ້ຫວັນ | 9.204,26 | 9.041,11 | 163,15 | 1,80 |
| SHANGHAI | ສປ. ຈີນ | 3.137,43 | 3.218,15 | -80,72 | -2,51 |
| SHENZHEN | ສປ. ຈີນ | 1.996,03 | 2.118,94 | -122,91 | -5,80 |
| S&P/ASX200 | ອົດສະຕາລີ | 5.613,50 | 5.351,30 | 262,2 | 4,90 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | ອາຊີ | 8.734,07 | 8.730,18 | 3,89 | 0,04 |
| STRAIT TIME | ສິງກະໂປ | 2.901,70 | 2.816,67 | 85,03 | 3,02 |
| SET | ໄທ | 1.508,57 | 1.478,30 | 30,27 | 2,05 |
| FBMLCI | ມາເລເຊຍ | 1.629,59 | 1.627,28 | 2,31 | 0,14 |
| JCI | ອິນໂດເນເຊຍ | 5.111,39 | 5.148,32 | -36,93 | -0,72 |
| PCOMP | ຟີລິບປິນ | 6.686,36 | 6.979,06 | -292,7 | -4,19 |
| HOCHIMIN | ສສ. ຫວຽດນາມ | 666,94 | 674,29 | -7,35 | -1,09 |
| HANOI | ສສ. ຫວຽດນາມ | 80,25 | 80,75 | -0,5 | -0,62 |
| CSX | ກໍາປູເຈຍ | 330,19 | 329,95 | 0,24 | 0,07 |
| LSX | ສປປ. ລາວ | 1.005,2 | 999,12 | 6,08 | 0,61 |
| MYANPIX | ມຽນມ້າ | 620,87 | 635,9 | -15,03 | -2,36 |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | ສ. ອາເມລິກາ | 3.869,99 | 3.561,13 | 308,86 | 8,67 |
| SET BANK | ໄທ | 482,88 | 476,65 | 6,23 | 1,31 |